ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ການເງິນ

ກົມພາສີ

ເລກທີ: ..00609../ກພສ

ນະຄອນຫຼວງວຽງຈັນ, ວັນທີ: 03 ກຸມພາ 2020

**ແຈ້ງການ**

ເຖິງ: ຫົວໜ້າດ່ານພາສີສາກົນຂົວມິດຕະພາບ 1;

ເລື່ອງ: ການນຳໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ (Lao National Single Window) ເຂົ້າໃນການຄຸ້ມຄອງການນຳເຂົ້າສິນຄ້າປະເພດພາຫະນະ ຢູ່ດ່ານພາສີສາກົນຂົວມິດຕະພາບ 1.

- ອີງຕາມ ບົດແນະນຳຂອງກະຊວງການເງິນ, ສະບັບເລກທີ 4217/ກງ, ລົງວັນທີ 28 ທັນວາ 2018, ວ່າດ້ວຍການ ນຳໃຊ້ລະບົບແຈ້ງພາສີປະຕູດຽວ;
- ອີງຕາມ ຂໍ້ຕົກລົງຂອງກະຊວງການເງິນ, ສະບັບເລກທີ 0204/ກງ, ລົງວັນທີ 15 ມັງກອນ 2019, ວ່າດ້ວຍການອະນຸມັດນຳໃຊ້ລະບົບແຈ້ງພາສີປະຕູດຽວ;
- ອີງຕາມ ຄຳແນະນຳເພີ່ມເຕີມຂອງກົມພາສີ, ສະບັບເລກທີ 04145/ກພສ, ລົງວັນທີ 23 ພຶດສະພາ 2019, ກ່ຽວກັບການນຳໃຊ້ລະບົບແຈ້ງພາສີປະຕູດຽວ;
- ອີງຕາມ ບົດບັນທຶກການປຶກສາຫາລືຕໍ່ກັບກົນໄກການເຊື່ອມຕໍ່ຂອງລະບົບແຈ້ງພາສີປະຕູດຽວ ແລະ ລະບົບການຊຳລະຂອງທະນາຄານ, ທີ່ກົມພາສີ, ຄັ້ງວັນທີ 03 ກຸມພາ 2020.

ໃນໄລຍະຜ່ານມາ ກົມພາສີ ໄດ້ມີການປັບປຸງກົນໄກ ການເຊື່ອມຕໍ່ລະບົບການຊຳລະ ລະຫວ່າງລະບົບແຈ້ງພາສີປະຕູດຽວ ແລະ ລະບົບຂອງທະນາຄານ, ຈຶ່ງໄດ້ໂຈະການນຳໃຊ້ຊົ່ວຄາວການນຳໃຊ້ລະບົບດັ່ງກ່າວ. ແຕ່ມາຮອດປະຈຸບັນ ລະບົບໄດ້ຮັບການປັບປຸງສຳເລັດແລ້ວ. ສະນັ້ນ, ເພື່ອຮັບປະກັນປະສິດທິຜົນ, ຄວາມຄ່ອງຕົວໃນການນຳໃຊ້ລະບົບ ແລະ ຄວາມເປັນເອກະພາບ ໃນການເປີດນຳໃຊ້ຄືນ ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ຢູ່ດ່ານພາສີສາກົນຂົວມິດຕະພາບ 1,

**ຮັກສາການຫົວໜ້າກົມພາສີ ອອກແຈ້ງການດັ່ງນີ້:**

1. ມອບໃຫ້ດ່ານພາສີສາກົນຂົວມິດຕະພາບ 1 ເອົາໃຈໃສ່ຊີ້ນຳໜ່ວຍງານທີ່ຕິດພັນກັບວຽກງານການແຈ້ງພາສີປະຕູດຽວແຫ່ງຊາດ ໃຫ້ເລີ່ມນຳໃຊ້ລະບົບດັ່ງກ່າວຄືນໃໝ່ ສຳລັບການຄຸ້ມຄອງການນຳເຂົ້າສິນຄ້າປະເພດຍານພາຫະນະລົດໃຫຍ່ ທີ່ນຳເຂົ້າໃນຮູບແບບເສຍພາສີ ນັບແຕ່ວັນທີ 06 ກຸມພາ 2020 ເປັນຕົ້ນໄປ.
2. ການຈັດຕັ້ງປະຕິບັດ ຕາມບົດແນະນຳຂອງກະຊວງການເງິນ, ສະບັບເລກທີ 4217/ກງ, ລົງວັນທີ 28 ທັນວາ 2018 ແລະ ຄຳແນະນຳເພີ່ມເຕີມຂອງກົພາສີ, ສະບັບເລກທີ 04145/ກພສ, ລົງວັນທີ 23 ພຶດສະພາ 2019.
3. ຖ້າຜູ້ປະກອບການໃດທີ່ຍັງບໍ່ທັນໄດ້ລົງທະບຽນນຳໃຊ້ລະບົບແຈ້ງພາສີປະຕູດຽວ ແມ່ນສາມາດປະສານສົມທົບໂດຍກົງຫາ ບໍລິສັດຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວ (ອີເມວ: helpdesk@laonsw.net, ເບີໂທ: 020 5558 6617, 020 5554 4634 ແລະ 020 5554 4638) ແລະ ມອບໃຫ້ດ່ານພາສີສາກົນຂົວມິດຕະພາບ 1 ເປັນເຈົ້າການໃນການແນະນຳໃຫ້ຜູ້ກ່ຽວ ດຳເນີນຂັ້ນຕອນການລົງທະບຽນ ແລະ ອອກລະຫັດຜູ້ນຳໃຊ້ໂດຍໄວ ກ່ອນວັນທີ 29 ກຸມພາ 2020. ນັບແຕ່ວັນທີ 01 ມີນາ 2020 ເປັນຕົ້ນໄປ, ທຸກການນຳເຂົ້າ ແລະ ສົ່ງ

ອອກສິນຄ້າປະເພດຍານພາຫະນະ ຜ່ານດ່ານພາສີສາກົນຂົວມິດຕະພາບ 1 ຕ້ອງດຳເນີນການແຈ້ງຂໍ້ມູນ ແລະ ເອກະສານຜ່ານລະບົບແຈ້ງພາສີປະຕູດຽວທັງໝົດ.

4. ມອບໃຫ້ດ່ານພາສີສາກົນຂົວມິດຕະພາບ 1 ເຜີຍແຜ່, ແນະນຳຜູ້ປະກອບການໃຫ້ຊາບ. ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າພົບຂໍ້ຫຍຸ້ງຍາກ ໃຫ້ລາຍງານຫາກົມພາສີ ເພື່ອມີຄຳເຫັນຊີ້ນຳໃນການແກ້ໄຂໂດຍໄວ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຮັກສາການຫົວໜ້າກົມພາສີ**

ກະຊວງ ການເງິນ ... ກົມພາສີ

ບຸນປະເສີດ ສີກຸນລະບຸດ

ບ່ອນນຳສົ່ງ:

| | |
|---|---|
| - ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ | 1 ສະບັບ "ເພື່ອລາຍງານ"; |
| - ທ່ານຮອງລັດຖະມົນຕີກະຊວງການເງິນ ຜູ້ຊີ້ນຳ | 1 ສະບັບ "ເພື່ອລາຍງານ"; |
| - ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ | 1 ສະບັບ "ເພື່ອຊາບ"; |
| - ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ | 1 ສະບັບ "ເພື່ອຊາບ"; |
| - ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 1 ສະບັບ "ເພື່ອຊາບ"; |
| - ກອງຄຸ້ມຄອງພາສີ V | 1 ສະບັບ "ເພື່ອຊາບ"; |
| - ບໍລິສັດຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວ (LNSW) | 1 ສະບັບ "ເພື່ອຊາບ ແລະ ປະຕິບັດ". |